ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 09 /ລບ
ນະຄອນຫຼວງວຽງຈັນ, ວັນທີ 14.1.2015

# ດຳລັດ
# ວ່າດ້ວຍສິລະປະການສະແດງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003;
- ອີງຕາມໜັງສືສະເໜີ ຂອງລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ສະບັບເລກທີ 348/ຖວທ, ລົງວັນທີ 08 ກໍລະກົດ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານສິລະປະການສະແດງ ເພື່ອຮັບປະກັນສິດ ແລະພັນທະຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການດຳເນີນກິດຈະການກ່ຽວກັບ ສິລະປະການສະແດງ ໃຫ້ມີລັກສະນະຊາດ, ກ້າວໜ້າ ແລະມະຫາຊົນ ແນໃສ່ສົ່ງເສີມສິດເປັນເຈົ້າຂອງປະຊາຊົນໃຫ້ມີສ່ວນຮ່ວມໃນການຟື້ນຟູ, ອະນຸລັກ, ພັດທະນາ ແລະຊົມໃຊ້ສິລະປະວັດທະນະທຳ, ເຜີຍແຜ່ແນວທາງນະໂຍບາຍ, ລະບຽບ, ກົດໝາຍ, ສະກັດກັ້ນປາກົດການຫຍໍ້ທໍ້ທາງດ້ານສິລະປະວັດທະນະທຳປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ, ພັດທະນາປະເທດຊາດ ແລະສາມາດເຊື່ອມໂຍງກັບພາກພື້ນ ແລະສາກົນ.

**ມາດຕາ 2 ສິລະປະການສະແດງ**

ສິລະປະການສະແດງ ແມ່ນການເຄື່ອນໄຫວນຳເອົາຜົນງານ, ຜະລິດຕະພັນດ້ານວັດທະນະທຳ ອອກສະແດງສູ່ມວນຊົນ ດ້ວຍການຂັບ, ລຳ, ຮ້ອງເພງ, ຟ້ອນ, ດົນຕີ, ກາຍຍະສິນ, ລະຄອນປະເພດຕ່າງໆ ແລະສິລະປະການສະແດງອື່ນ ໂດຍການນຳໃຊ້ເຕັກນິກ, ແສງ, ສີ, ສຽງ ປະກອບໃນເວທີ.

ມາດຕາ 3 **ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິລະປະ** ໝາຍເຖິງ ຄຸນຄ່າລວມຍອດ ຂອງອາລົມຈິດ, ຄວາມງາມ, ຄວາມຮູ້ສຶກ, ອຸດົມການ, ແນວຄິດຈິນຕະນາການ, ການເຄື່ອນໄຫວຂອງຄົນ, ຄຸນສົມບັດ, ສິນທຳ, ແບບແຜນການດຳລົງຊີວິດ ເພື່ອເປັນການຖ່າຍທອດເລື່ອງລາວຕ່າງໆ ຂອງສັງຄົມ, ທຳມະຊາດ ແລະປະຫວັດສາດໃຫ້ຜູ້ອື່ນໄດ້ຮຽນຮູ້, ໄດ້ຊົມໃຊ້ ແລະໄດ້ເຂົ້າໃຈຄວາມໝາຍ;
2. **ສິລະປິນ** ໝາຍເຖິງ ຜູ້ສ້າງສັນສິລະປະ ຊຶ່ງເປັນຜົນງານແບບຮູບປະທຳ ແລະ ນາມມະທຳ ເຊັ່ນ: ນັກປະພັນ, ນັກກະວີ, ນັກປະດິດແຕ່ງ, ນັກສະແດງ, ໝໍລຳ, ລຳ, ນັກຮ້ອງເພງ, ນັກດົນຕີ, ນັກຟ້ອນ, ນັກສະແດງກາຍຍະສິນ, ລະຄອນ, ຮູບເງົາ, ໂຄສົກ, ພິທີກອນ, ນັກພາກ, ນັກເດີນແບບ, ຖ່າຍແບບ ແລະນັກຈິດຕະກອນສາຂາຕ່າງໆ;
3. **ສິລະປິນດ່ຽວ** ໝາຍເຖິງບຸກຄົນທີ່ເຄື່ອນໄຫວວຽກງານສິລະປະການສະແດງພຽງຜູ້ດຽວ;
4. **ສິລະປິນລວມໝູ່** ໝາຍເຖິງ ກຸ່ມຄົນແຕ່ສອງຄົນຂຶ້ນໄປ ທີ່ຮ່ວມກັນເຄື່ອນໄຫວວຽກງານສິລະປະການສະແດງ;
5. **ຂັບ, ລຳ ແລະຮ້ອງເພງ** ໝາຍເຖິງ ສິລະປະການສະແດງທີ່ໃຊ້ສຽງຂອງຄົນ;
6. **ດົນຕີ** ໝາຍເຖິງ ສິລະປະແຫ່ງສຽງ ຊຶ່ງສະທ້ອນມາຈາກເຄື່ອງດົນຕີ ປະເພດຕ່າງໆ ເປັນຕົ້ນ: ດີດ, ສີ, ຕີ, ເປົ່າ ແລະດ້ວຍວິທີການອື່ນ ທີ່ຖືກນຳມາຮ້ອຍກອງໃຫ້ເກີດເປັນບົດ, ເປັນຈັງຫວະ, ທຳນອງ ຕາມອົງປະກອບສະເພາະ ຂອງດົນຕີ;
7. **ຟ້ອນ** ໝາຍເຖິງ ການເຄື່ອນເໜັງ ຂອງຮ່າງກາຍປະກອບເປັນຈັງຫວະ, ລີລາທ່າທາງ ເພື່ອສະແດງອາລົມຈິດຕາມຈຸດປະສົງ ແລະຈິນຕະນາການ ຂອງຜູ້ປະດິດແຕ່ງ;
8. **ກາຍຍະສິນ** ໝາຍເຖິງ ການສະແດງທີ່ໃຊ້ພະລັງກາຍ ແລະພະລັງຈິດ ຂອງຄົນໃຫ້ເປັນສິລະປະທີ່ນິ້ມນວນ, ຄ່ອງແຄ້ວ, ເຂັ້ມແຂງ, ຕື່ນເຕັ້ນ, ຕະຫຼົກ, ຊວນຫົວ ແລະວິທະຍາກົນ ທີ່ໜ້າງຶດງໍ້ອັດສະຈັນ;
9. **ລະຄອນ** ໝາຍເຖິງ ການສະແດງດ້ວຍພາສາເວົ້າ, ພາສາກີກດ້ວຍອາລົມຈິດ ແລະອະລິຍະບົດຕ່າງໆ ທີ່ສ່ອງແສງເຖິງຊີວິດ ຂອງຄົນໃນສັງຄົມ ໂດຍມີນັກສະແດງເປັນຜູ້ສວມວິນຍານ ແລະສະ ແດງອອກຕາມບົດຊຽນ ຂອງນັກປະພັນ;
10. **ອຸປະກອນປະກອບການສະແດງ** ໝາຍເຖິງ ເຄື່ອງນຸ່ງຖື, ເຄື່ອງເອ້ຍ້ອງ, ເຕັກນິກ, ແສງ, ສີ, ສຽງ ແລະວັດຖຸຕ່າງໆ;
11. **ເວທີສະແດງ** ໝາຍເຖິງ ສະຖານທີ່ຈັດການສະແດງທັງຢູ່ໃນຮົ່ມ ແລະກາງແຈ້ງ;
12. **ຜະລິດຕະພັນ ສິລະປະການສະແດງ** ໝາຍເຖິງ ໝາກຜົນຂອງການປະດິດແຕ່ງ ແລະ ສະແດງ ທີ່ໄດ້ບັນທຶກເຂົ້າໃນລະບົບອຸປະກອນເອເລັກໂຕຼນິກຕ່າງໆ;
13. **ຜູ້ຜະລິດສິລະປະການສະແດງ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຊັ່ນ: ນັກປະດິດແຕ່ງ, ນັກສະແດງ, ຜູ້ລົງທຶນ, ເຈົ້າຂອງບໍລິສັດ, ເຈົ້າຂອງຄ້າຍເພງ, ເຈົ້າຂອງລິຂະສິດ, ເຈົ້າຂອງຫ້ອງອັດສຽງ, ພາບ ແລະອື່ນໆ;

14. ການບັນທຶກພາບ ແລະສຽງ ໝາຍເຖິງ ການນໍາເອົາບົດປະພັນ ແລະການສະແດງ ຂະແໜງຕ່າງໆ ມາບັນທຶກເຂົ້າກັບອຸປະກອນເອເລັກໂຕຼນິກ;

15. **ລິຂະສິດ** ໝາຍເຖິງ ຜົນງານທີ່ໄດ້ມາຈາກສະຕິປັນຍາຂອງມະນຸດ ເປັນຜູ້ປະດິດຄິດແຕ່ງຂຶ້ນມາ ທາງດ້ານວຽກງານສິລະປະກໍາ ແລະວັນນະກໍາ ລວມທັງວຽກງານວິທະຍາສາດ;

16. **ສິດກ່ຽວຂ້ອງກັບລິຂະສິດ** ໝາຍເຖິງ ສິດ ຂອງບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທີ່ກ່ຽວ ຂ້ອງກັບລິຂະສິດໃນຂົງເຂດການສະແດງ, ການບັນທຶກສຽງ-ພາບ ແລະລາຍການກະຈາຍສຽງ-ພາບ ຫຼືລາຍການຜ່ານສັນຍານດາວທຽມ ທີ່ເຂົ້າລະຫັດ;

17. **ຜູ້ຈໍາໜ່າຍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ດໍາເນີນທຸລະກິດ, ຄ້າຂາຍຜະລິດຕະພັນສິລະປະການສະແດງ;

18. **ຜູ້ນໍາໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທີ່ນໍາເອົາບົດປະພັນ, ຜະລິດຕະພັນສິລະປະ ໄປເຄື່ອນໄຫວສະແດງ, ປະກອບກິດຈະກາມ ແລະໂຄສະນາເຜີຍແຜ່;

19. **ຜູ້ຊົມໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງຢູ່ໃນສັງຄົມ ທັງພາຍໃນ ແລະ ຕ່າງປະເທດ;

20. **ການນໍາເຂົ້າ-ສົ່ງອອກ** ໝາຍເຖິງ ການນໍາເຂົ້າ ຫຼືສົ່ງອອກສິລະປິນ, ວັດຖຸອຸປະກອນ ແລະຜະລິດຕະພັນ ສິລະປະການສະແດງ ຈາກຕ່າງປະເທດເຂົ້າມາ ສປປ ລາວ ແລະຈາກພາຍໃນອອກ ສູ່ຕ່າງປະເທດ;

21. **ສິລະປະທີ່ມີລັກສະນະພິດໄພ** ໝາຍເຖິງ ສິລະປະທີ່ມີເນື້ອໃນໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຕໍ່ແນວທາງນະໂຍບາຍ, ຮີດຄອງປະເພນີອັນດີງາມ ຂອງ ສປປ ລາວ ມີລັກສະນະກະຕຸ້ນຄວາມຮຸນແຮງ, ແບ່ງແຍກຄວາມສາມັກຄີ ລະຫວ່າງເຜົ່າ, ສາສະໜາ ແລະລະຫວ່າງ ປະເທດເຮົາ ກັບ ປະເທດເພື່ອນມິດຕ່າງໆ;

22. **ສິລະປະທີ່ມີລັກສະນະລາມົກອານາຈານ** ໝາຍເຖິງ ການໃຊ້ວາຈາຫຍາບຄາຍ, ການສະແດງ ທີ່ບໍ່ສຸພາບ, ເປືອຍເປົ່າ, ອວດໂສມ, ໂປ້ເປືອຍຮ່າງກາຍ ທີ່ກະຕຸ້ນອາລົມທາງເພດ;

23. **ສິລະປະທີ່ມີລັກສະນະຊອດກະຈາ** ໝາຍເຖິງ ການປະດິດຄິດແຕ່ງ ສະແດງສິລະປະປະເພດຕ່າງໆ ທີ່ມີລັກສະນະປົນເປ, ຕາບຈູມ, ບໍ່ຮູ້ແຫຼ່ງກໍາເນີດ ແລະທີ່ມາຂອງສິລະປະນັ້ນໆ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານສິລະປະການສະແດງ**

ລັດມີນະໂຍບາຍກ່ຽວກັບວຽກງານສິລະປະການສະແດງ ດັ່ງນີ້:

1. ຊຸກຍູ້, ຟື້ນຟູ, ສົ່ງເສີມ, ອະນຸລັກ, ພັດທະນາ ແລະເຜີຍແຜ່ ສິລະປະການສະແດງຂອງຊາດ, ຂອງເຜົ່າ ທີ່ມີລັກສະນະຊາດ, ກ້າວໜ້າ ແລະມະຫາຊົນ ໃຫ້ມີຄວາມອຸດົມສົມບູນ ດ້ວຍການບໍາລຸງ, ຍົກສູງຄວາມຮູ້ຄວາມສາມາດ, ສ້າງຄົນລາວໃຫ້ມີນໍ້າໃຈຮັກຊາດ, ຮັກລະບອບ ປະຊາທິປະໄຕ ປະຊາຊົນ, ມີແບບແຜນການດໍາລົງຊີວິດທີ່

ສິດໃສຈິບງາມ, ຮັບເອົາສິ່ງຍອດຍິ່ງຂອງມວນມະນຸດ ແລະປະກອບ ສ່ວນເສີມສ້າງ ສິລະປະວັດທະນະທຳອັນດີງາມ ຂອງຊາດໃຫ້ຍືນຍົງ;

2. ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ມີສ່ວນຮ່ວມໃນການຄົ້ນຄວ້າປະດິດແຕ່ງ, ພັດທະນາ, ສ້າງສັນ, ສາມັກຄີປອງດອງ, ຊົມໃຊ້ ແລະສົ່ງເສີມສິລະປະການສະແດງໃຫ້ມີຄວາມອຸດົມ ຮັ່ງມີຫຼາຍຮູບ, ຫຼາຍສີ ຕອບສະໜອງຄວາມຮຽກຮ້ອງ ຕ້ອງການທາງດ້ານຊີວິດຈິດໃຈ ຂອງປະຊາຊົນ ເຮັດໃຫ້ຜະລິດຕະພັນດ້ານສິລະປະການສະແດງ ມີປະລິມານ ແລະຄຸນນະພາບດີຂຶ້ນ, ແກ້ໄຂສະພາບ " ບໍລິຫານຄອບງໍາ ", ຕ້ານທ່າອ່ຽງທີ່ຫັນເອົາ " ສິລະປະວັດທະນະທໍາເປັນການຄ້າພຽງຢ່າງດຽວ ";

3. ປົກປ້ອງສິດທີ່ອັນຊອບທໍາ ຂອງນັກປະດິດແຕ່ງ, ນັກສະແດງ, ຜູ້ລົງທຶນ, ເຈົ້າຂອງບໍລິສັດ, ເຈົ້າຂອງຄ້າຍເພງ, ເຈົ້າຂອງລິຂະສິດ, ເຈົ້າຂອງຫ້ອງອັດສຽງ, ພາບ, ຜູ້ປະກອບກິດຈະການ ແລະຜູ້ຊົມໃຊ້ ສິລະປະການສະແດງ.

### ມາດຕາ 5 **ຫຼັກການພື້ນຖານຂອງວຽກງານສິລະປະການສະແດງ**

ການເຄື່ອນໄຫວວຽກງານສິລະປະການສະແດງໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຕ້ອງສ່ອງແສງເຖິງວັດທະນະທໍາ ທີ່ເປັນມໍຣະດົກອັນລໍ້າຄ່າທາງພູມປັນຍາ ຂອງບັນພະບູລຸດທີ່ສະທ້ອນໃຫ້ເຫັນເອກະລັກ, ສີສັນ, ຄ່ານິຍົມ ອັນເປັນລັກສະນະພິເສດ ຂອງປະຊາຊົນລາວ ບັນດາເຜົ່າ;
2. ຕ້ອງຕິດພັນກັບການຟື້ນຟູ, ປົກປັກຮັກສາ, ພັດທະນາ ແລະເສີມຂະຫຍາຍມູນເຊື້ອສິລະປະວັດທະນະທໍາອັນດີງາມ ຂອງຊາດ, ຂອງເຜົ່າ ທີ່ມີລັກສະນະຊາດ, ກ້າວໜ້າ, ມະຫາຊົນ ແລະຕ້ອງຕິດພັນກັບແນວທາງນະໂຍບາຍຂອງພັກ-ລັດ ແຕ່ລະໄລຍະ;
3. ຕ້ອງມີການເປີດກ້ວາງການພົວພັນແລກປ່ຽນທາງດ້ານສິລະປະວັດທະນະທໍາ ກັບບັນດາປະເທດ ໃນພາກພື້ນ ແລະສາກົນ, ຮັບເອົາສິ່ງຍອດຍິ່ງທາງດ້ານສິລະປະວັດທະນະທໍາ ຂອງມວນມະນຸດ ມາເສີມສ້າງສິລະປະວັດທະນະທໍາລາວ ໃຫ້ຮັ່ງມີ, ຫຼາຍຮູບ, ຫຼາຍສີ ຢ່າງບໍ່ຢຸດຢັ້ງ ພ້ອມກັນນັ້ນກໍມີການເລືອກເຟັ້ນ ແລະສະກັດກັ້ນກະແສສິລະປະວັດທະນະທໍາທີ່ເປັນພິດໄພ;
4. ຕ້ອງຕິດພັນກັບ ການຊຸກຍູ້ສົ່ງເສີມພອນສະຫວັນດ້ານຕ່າງໆ ຂອງນັກປະດິດຄິດແຕ່ງ, ນັກສະແດງ, ເສີມຂະຫຍາຍສິດປະຊາທິປະໄຕ ແລະເສລີພາບ ໃນການຄົ້ນຄິດປະດິດແຕ່ງ ພ້ອມກັນນັ້ນກໍຍົກສູງຄວາມຮັບຜິດຊອບ ທາງດ້ານການເມືອງ, ຄຸນສົມບັດສິນທໍາ ແລະຈັນຍາບັນຂອງຖັນແຖວ ຜູ້ເຄື່ອນໄຫວສິລະປະການສະແດງ;
5. ຕ້ອງຕິດພັນກັບການເພີ່ມທະວີລັກສະນະຕັ້ງໜ້າ ຂອງສິລະປະວັດທະນະທໍາ, ຢັ້ງຢືນບັນດາປັດໃຈໃໝ່ ຂອງສັງຄົມ ແລະຄຸນຄ່າອັນຈົບງາມ ຂອງຊາດ, ແກ້ໄຂສິ່ງກີດຂວາງ, ຖ່ວງດຶງຄວາມກ້າວໜ້າ ຂອງປະຊາຊົນບັນດາເຜົ່າ ແລະບາດກ້າວເດີນຂອງປະເທດຊາດ, ກ້າຫານຕໍານິວິຈານ ແລະກໍາຈັດ ແກ້ໄຂສິ່ງລາມົກອະນາຈານ, ເຊື່ອມຊາມ, ຮຸນແຮງໃນສັງຄົມ;

6. ຕ້ອງມີລັກສະນະສຶກສາອົບຮົມ, ຊຸກຍູ້ປຸກລະດົມໃຫ້ທົ່ວປວງຊົນ ມີຄວາມຕື່ນຕົວເຂົ້າຮ່ວມ ແລະມີຄວາມຮັບຜິດຊອບໃນພາລະກິດຟື້ນຟູ, ປົກປັກຮັກສາ, ພັດທະນາ ແລະເສີມຂະຫຍາຍມູນເຊື້ອສິລະປະວັດທະນະທຳອັນດີງາມ ຂອງຊາດ, ຂອງເຜົ່າ ແລະໄດ້ຮັບຜົນປະໂຫຍດອັນຊອບທຳ ທາງດ້ານວັດຖຸ ແລະຈິດໃຈ.

### ມາດຕາ 6 ການຮ່ວມມືສາກົນ

ລັດສົ່ງເສີມການພົວພັນ, ຮ່ວມມື, ກັບຕ່າງປະເທດ, ພາກພື້ນ ແລະສາກົນ ດ້ວຍການແລກປ່ຽນ ສິລະປະວັດທະນະທຳ, ສິລະປະການສະແດງ, ຍາດແຍ່ງເອົາການຊ່ວຍເຫຼືອ ທາງດ້ານທຶນຮອນ, ວິຊາການ, ເຕັກໂນໂລຢີ, ຂໍ້ມູນຂ່າວສານ ເພື່ອເຮັດໃຫ້ວຽກງານສິລະປະການສະແດງມີຄຸນນະພາບ ແລະທັນສະໄໝ ບົນພື້ນຖານ ການເຄົາລົບກົດໝາຍ ແລະຮີດຄອງປະເພນີອັນດີງາມຂອງກັນ ແລະ ກັນ ດ້ວຍຈິດໃຈມິດຕະພາບ, ການພັດທະນາ ແລະປະຕິບັດຕາມສົນທິສັນຍາ ແລະສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 7 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບວຽກງານສິລະປະການສະແດງຢູ່ ສປປ ລາວ ແລະຕ່າງປະເທດ.

## ໝວດທີ 2
## ສິດເສລີພາບ ຂອງພົນລະເມືອງລາວ ໃນການເຄື່ອນໄຫວດ້ານສິລະປະການສະແດງ

### ມາດຕາ 8 ສິດເສລີພາບຂອງພົນລະເມືອງລາວ

ພົນລະເມືອງລາວ ມີສິດເສລີພາບໃນການເຄື່ອນໄຫວ, ຄົ້ນຄວ້າ ປະດິດຄິດແຕ່ງບົດປະພັນ, ສະແດງຜົນງານ ແລະປະກອບກິດຈະການ, ປະກອບຄຳເຫັນ, ສະແດງທັດສະນະຕຳນິວິຈານຕໍ່ບົດປະພັນ, ຜະລິດຕະພັນຂອງບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ໃນທາງສ້າງສັນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

### ມາດຕາ 9 ສິດໄດ້ຮັບຂໍ້ມູນ ຂ່າວສານ

ພົນລະເມືອງລາວ ມີສິດໄດ້ຮັບຂໍ້ມູນຂ່າວສານ, ສາລະຄວາມຮູ້, ສາລະບັນເທີງ ແລະຊົມໃຊ້ ຜະລິດຕະພັນ ສິລະປະການສະແດງ ທັງພາຍໃນ ແລະຕ່າງປະເທດ ທີ່ບໍ່ຂັດກັບກົດໝາຍ, ລະບຽບການ ແລະມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງເຜົ່າ.

## ໝວດທີ 3
## ປະເພດ ແລະລັກສະນະຂອງສິລະປະການສະແດງ

### ມາດຕາ 10 ປະເພດສິລະປະການສະແດງ

ສິລະປະການສະແດງປະກອບດ້ວຍ:

1. ຂັບ, ລຳທ້ອງຖິ່ນ, ເຜົ່າຊົນ ແລະຮ້ອງເພງປະເພດຕ່າງໆ;

2. ດົນຕີພື້ນເມືອງ, ເຜົ່າຊົນ, ດົນຕີສາກົນປະເພດຕ່າງໆ;
3. ຟ້ອນພື້ນເມືອງ, ເຜົ່າຊົນ ແລະຟ້ອນສາກົນປະເພດຕ່າງໆ;
4. ກາຍຍະສິນສະແດງໂດຍຄົນ, ໂດຍສັດ, ວິທະຍາກົນ, ຕະຫຼົກ, ຊວນຫົວ;
5. ລະຄອນເວົ້າ, ລະຄອນກົກ, ລະຄອນລໍາ, ລະຄອນຕຸກກະຕາ, ຫຸ່ນ, ລະຄອນຟ້ອນ, ລະຄອນເພງ, ລະຄອນຕະຫຼົກ, ຊວນຫົວ, ລະຄອນວິທະຍຸ, ລະຄອນໂທລະພາບ, ລະຄອນຮູບເງົາ ແລະອື່ນໆ;
6. ການລະຫຼິ້ນພື້ນເມືອງຕາມຮີດຄອງປະເພນີ, ບຸນສິນກິນທານ ຂອງທ້ອງຖິ່ນ, ເຜົ່າຊົນ ແລະອື່ນໆ.

**ມາດຕາ 11 ລັກສະນະຂອງສິລະປະການສະແດງ**

ສິລະປະການສະແດງປະກອບດ້ວຍ:

1. ລັກສະນະປຸກລະດົມ, ສຶກສາອົບຮົມ ແລະຕໍ່ສູ້;
2. ລັກສະນະສັງສັນບັນເທີງ.

**ມາດຕາ 12 ລັກສະນະປຸກລະດົມ, ສຶກສາອົບຮົມ ແລະຕໍ່ສູ້**

ສິລະປະການສະແດງທຸກປະເພດ ຕ້ອງແນໃສ່ສຶກສາອົບຮົມໂຄສະນາເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະຄວາມຮູ້ດ້ານຕ່າງໆ; ສົ່ງເສີມຂະບວນການອອກແຮງງານ,ວຽກ ດີຄົນເດັ່ນ, ປຸກລະດົມນໍ້າໃຈຮັກຊາດ, ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນຂອງທົ່ວປວງຊົນ, ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ ໃນການອະນຸລັກປົກ ປັກຮັກສາ ແລະສ້າງສາພັດທະນາປະເທດຊາດ ແຕ່ລະຍຸກ, ແຕ່ລະສະໄໝ; ເປັນສື່ສໍາພັນແລກປ່ຽນທາງດ້ານສິລະປະວັດທະນະທໍາ ກັບ ບັນດາປະເທດໃນພາກພື້ນ ແລະສາກົນ.

**ມາດຕາ 13 ລັກສະນະສັງສັນບັນເທີງ**

ສິລະປະການສະແດງທຸກປະເພດ ແນໃສ່ສ້າງບັນຍາກາດຟົດຟື້ນ, ເບີກບານ, ມ່ວນຊື່ນ, ພັກຜ່ອນ ຍ່ອນອາລົມ, ສ້າງຄວາມຮັກ, ຄວາມຫວັງເຊື່ອໝັ້ນ, ຄວາມກະຕືລືລົ້ນຕໍ່ອະນາຄົດຂອງຕົນ ແລະປະເທດຊາດ, ສ້າງຄວາມສາມັກຄີປອງດອງ, ຮັກແພງລະຫວ່າງຄົນກັບຄົນ ເປັນຕົ້ນການພົວພັນລະຫວ່າງຄອບຄົວ, ຍາດພີ່ນ້ອງ, ເພື່ອນມິດສະຫາຍ, ເພື່ອນຮ່ວມງານ, ລະຫວ່າງເຜົ່າ ແລະເພື່ອນມິດສາກົນ; ສ້າງຄວາມຮັກລະຫວ່າງຄົນກັບທໍາມະຊາດ ເຊັ່ນ: ສິ່ງແວດລ້ອມ, ພູຜາປ່າດົງ, ແມ່ນໍ້າລໍາເຊ, ສັດສາວາສິ່ງ ແລະຊີວະນາໆ ພັນ.

## ໝວດທີ 4
## ການດໍາເນີນກິດຈະການກ່ຽວກັບສິລະປະການສະແດງ

**ມາດຕາ 14 ການດໍາເນີນກິດຈະການກ່ຽວກັບສິລະປະການສະແດງ**

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທັງພາຍໃນ ແລະຕ່າງປະເທດ ທີ່ມີຈຸດປະສົງດໍາເນີນກິດຈະການກ່ຽວກັບສິລະປະການສະແດງ ເປັນຕົ້ນ ຄ້າຍເພງ, ວົງດົນຕີ, ຄະນະສະແດງ, ຫ້ອງອັດພາບ, ສຽງ, ໂຮງຮຽນສິລະປະ ແລະກິດຈະການອື່ນ ກ່ຽວກັບສິລະປະການສະແດງ ຕ້ອງໄດ້ຮັບ

ການອະນຸຍາດຢ່າງຖືກຕ້ອງຈາກ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກຳນົດໄວ້ໃນມາດຕາ 38, 39 ແລະ 40 ຂອງດຳລັດສະບັບນີ້ ແລະ ຂຶ້ນທະບຽນນຳຂະແໜງການອຸດສາຫະກຳ ແລະການຄ້າ ຕາມກົດໝາຍວ່າດ້ວຍ ວິສາຫະກິດ ແລະກົດໝາຍອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 15 ເງື່ອນໄຂດຳເນີນກິດຈະການສິລະປະການສະແດງ**

ເງື່ອນໄຂດຳເນີນກິດຈະການສິລະປະການສະແດງມີ ດັ່ງນີ້:

1. ຊື່, ຈຸດປະສົງ, ເປົ້າໝາຍຮັບໃຊ້ຂອງຕົນ ແລະບົດວິພາກເສດຖະກິດ;
2. ສະຖານທີ່, ພາຫະນະ, ອຸປະກອນເຕັກນິກ, ທຶນ ເພື່ອຮັບປະກັນ ໃຫ້ແກ່ການເຄື່ອນໄຫວ ວຽກງານຂອງຕົນ;
3. ບຸກຄະລາກອນທີ່ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດດ້ານວຽກງານສິລະປະການສະແດງ;
4. ໄດ້ຮັບການອະນຸຍາດຈາກ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ.

**ມາດຕາ 16 ການກວດຜ່ານຜະລິດຕະພັນສິລະປະການສະແດງ**

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ມີຈຸດປະສົງກວດຜ່ານເນື້ອໃນລາຍການສິລະປະການສະແດງ ປະເພດຕ່າງໆ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ຕາມລະບຽບການ ຂອງຂະແໜງການ ຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວກຳນົດ.

## ໝວດທີ 5
## ເນື້ອໃນ, ຮູບການປະດິດແຕ່ງ, ການສົ່ງອອກ-ນຳເຂົ້າສິລະປິນ ແລະຜະລິດຕະພັນສິລະປະການສະແດງ

**ມາດຕາ 17 ເນື້ອໃນການປະດິດແຕ່ງສິລະປະການສະແດງປະເພດຕ່າງໆ**

ການປະດິດແຕ່ງສິລະປະການສະແດງປະເພດຕ່າງໆໃຫ້ມີເນື້ອໃນ ດັ່ງນີ້:

1. ສັນລະເສີນມູນເຊື້ອພິລະອາດຫານ, ຜົນງານ, ໄຊຊະນະ, ຄຸນງາມຄວາມດີ ຂອງບັນພະບູລຸດ ແລະປະຊາຊົນລາວບັນດາເຜົ່າ ໃນພາລະກິດແຫ່ງການຕໍ່ສູ້ກູ້ຊາດ ຕ້ານພວກຮຸກຮານຍາດແຍ່ງເອົາເອກະລາດ ແລະອິດສະລະພາບ ມາສູ່ປະເທດຊາດ, ສັນລະເສີນຂະບວນການ ວຽກດີຄົນເດັ່ນ ຂອງຂະແໜງການ ແລະທ້ອງຖິ່ນ ໃນແຕ່ລະຍຸກແຕ່ລະສະໄໝ;
2. ສັນລະເສີນເຖິງຄວາມອຸດົມຮັ່ງມີ, ມູນເຊື້ອສິລະປະວັດທະນະທຳອັນດີງາມ ຂອງຊາດ, ຂອງເຜົ່າ, ນ້ຳໃຈຫວງແຫນໃນການຟື້ນຟູ, ອະນຸລັກ, ປົກປັກຮັກສາສະພາບແວດລ້ອມທີ່ສວຍສົດງົດງາມຂອງປະເທດຊາດບ້ານເມືອງ;
3. ສັນລະເສີນ ວັນບຸນສຳຄັນຕ່າງໆ ທາງດ້ານປະຫວັດສາດ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;
4. ສົ່ງເສີມສິດສະເໝີພາບ ລະຫວ່າງຍິງ-ຊາຍ, ປຸກລະດົມອະນຸຊົນ, ເຍົາວະຊົນ, ໄວໜຸ່ມຝຶກຝົນຫຼໍ່ຫຼອມ, ຊອກຮູ້ຮໍ່າຮຽນ ແລະພັດທະນາຕົນເອງໃຫ້ເປັນລູກຫຼານທີ່ດີ ຂອງພໍ່

ແມ່, ເປັນພົນລະເມືອງດີ, ມີຄວາມດຸໝັ່ນຂະຫຍັນພຽນ, ຊື່ສັດ, ປະຢັດ, ອົດທົນ, ເປັນຜູ້ສືບທອດອະນາຄົດ ຂອງຊາດ, ສ້າງສະຕິສັງຄົມ ໃຫ້ມີນ້ຳໃຈເຄົາລົບ ແລະປະຕິບັດລະບຽບ, ກົດໝາຍ;

5. ເສີມສ້າງຄວາມສາມັກຄີປອງດອງ ລະຫວ່າງປະຊາຊົນລາວ ບັນດາເຜົ່າພາຍໃນຊາດ, ສ້າງຄວາມສາມັກຄີມິດຕະພາບ ແລະການຮ່ວມມືພັດທະນາກັບເພື່ອນມິດສາກົນ;
6. ປຸກລະດົມສະຕິປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ເພື່ອປົກປັກຮັກສາຄວາມສະຫງົບສຸກ ແລະຊີວິດຊັບສິນ ຂອງປະຊາຊົນບັນດາເຜົ່າ;ເຂດນ້ຳແດນດິນຂອງປະເທດ;
7. ສ້າງຄວາມຮັກອັນສົດໃສ ລະຫວ່າງ ຄົນ ກັບ ຄົນ ເຊັ່ນ ລູກກັບພໍ່ແມ່, ອ້າຍເອື້ອຍນ້ອງ, ບ່າວ-ສາວ, ການພົວພັນຜົວ-ເມຍ ເພື່ອນມິດສະຫາຍ ແລະອື່ນໆ;
8. ພັນລະນາຄວາມຮູ້ສຶກຄວາມສຸກ, ຄວາມເບີກບານມ່ວນຊື່ນ ຂອງຄົນ ເຊັ່ນ ງານວັນເກີດ, ງານແຕ່ງດອງ ແລະການພົບປະສັງສັນອື່ນໆ ທີ່ມີຄວາມຈີບງາມ ແລະສົດໃສ;
9. ສົ່ງເສີມການປະດິດຄິດແຕ່ງ ເພື່ອການພັກຜ່ອນ, ຕະຫຼົກ, ຊວນຫົວ, ຕຳນິວິຈານ ບັນດາປາກົດການຫຍໍ້ທໍ້ຕ່າງໆ ໃນສັງຄົມ.

ມາດຕາ 18 **ຮູບການປະດິດແຕ່ງ**

ການປະດິດແຕ່ງ ບົດຂັບ, ລຳ, ເພງຮ້ອງ, ຟ້ອນ, ດົນຕີ, ກາຍຍະສິນ, ລະຄອນປະເພດຕ່າງໆ ຕ້ອງອີງໃສ່ພື້ນຖານ ມູນເຊື້ອສິລະປະວັດທະນະທຳ ທີ່ມີສີສັນ ແລະເປັນເອກະລັກ ຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະນຳເອົາທິດສະດີ, ຫຼັກການພື້ນຖານ, ຮູບການທາງດ້ານວັດທະນະທຳອັນຍອດ ຍິ່ງຂອງມວນມະນຸດ ມາປະດິດສ້າງບົດປະພັນ ແລະການສະແດງ ຂອງຕົນ ໃຫ້ມີປະລິມານ ແລະ ຄຸນນະພາບນັບມື້ນັບຫຼາຍຂຶ້ນ ທັງມີຄວາມອຸດົມສົມບູນ, ຫຼາຍຮູບຫຼາຍສີ, ສອດຄ່ອງກັບເນື້ອໃນຈິດໃຈ ຂອງບົດປະພັນນັ້ນໆ ເພື່ອສະໜອງຄວາມຕ້ອງການທາງດ້ານສາລະໜ້າຮູ້ ແລະຄວາມລື່ນເລີງບັນເທີງ ໃຫ້ແກ່ຜູ້ຟັງ, ຜູ້ຊົມ.

ມາດຕາ 19 **ການໃຊ້ສັບ, ສຳນວນ ແລະທຳນອງໃນການປະດິດແຕ່ງບົດ ຂັບ, ລຳ ແລະເພງຮ້ອງ**

ໃນການປະດິດແຕ່ງບົດ ຂັບ, ລຳ ແລະເພງຮ້ອງ ໃຫ້ໃຊ້ສັບ, ສຳນວນ ແລະທຳນອງ ດັ່ງນີ້:

1. ຕ້ອງຮັກສາເອກະລັກສະເພາະ ຂອງແຕ່ລະຂັບ, ລຳ ແລະເພງຮ້ອງ ຂອງຊາດ, ທ້ອງຖິ່ນ, ເຜົ່າຊົນ; ຕ້ອງມີລັກສະນະພື້ນຖານພາສາຂອງຊາດ, ຂອງເຜົ່າ ມີລັກສະນະສຳພັດໃນ, ສຳພັດນອກ, ສຳພັດເກາະກ່າຍ, ສຳພັດອັກຄະລະ, ພະຍັນຊະນະ ແລະຮັກສາຈຸດພິເສດ ຂອງສຽງ, ອັກສອນຕ່ຳ, ກາງ, ສູງ, ສຽງວັນນະຍຸດໄມ້ເອກ, ໄມ້ໂທ, ມີລັກສະນະກາບກອນ, ກະວີ, ວັນນະຄະດີ, ມີການປຽບທຽບ, ເຊື່ອງຊ້ອນ, ກ້ຽວພາລາສີ ແລະສ້າງມະໂນພາບອັນເລິກເຊິ່ງ ໃນບົດຂັບ, ລຳ ແລະເພງຮ້ອງ ຕ່າງໆ;
2. ການເສບດົນຕີ ປະກອບເຂົ້າໃນການຂັບ, ລຳຕ່າງໆ ໃຫ້ໃຊ້ເຄື່ອງດົນຕີພື້ນເມືອງ ຂອງຊາດ ຂອງເຜົ່າເປັນຫຼັກ ເຊັ່ນ ປະເພດດີດ, ສີ, ຕີ, ເປົ່າ ທີ່ເປັນເອກະລັກສະເພາະ ຂອງການຂັບ, ລຳນັ້ນໆ ບາງກໍລະນີກໍອາດປະສົມປະສານກັບດົນຕີສາກົນອື່ນໆ ທີ່ສອດຄ່ອງກົມກືນກັນ;

3. ສົ່ງເສີມການນຳໃຊ້ຈັງຫວະ, ທຳນອງ, ຂັບ, ລຳ, ເພງພື້ນເມືອງ, ທ້ອງຖິ່ນ, ເຜົ່າຊົນເຜົ່າ ໃນການປະດິດຄິດແຕ່ງຈັງຫວະ, ທຳນອງເພງລາວສະໄໝປະເພດຕ່າງໆ ໃຫ້ສອດຄ່ອງກັນ ແລະມີທິວຄິດປະ ດິດສ້າງ;
4. ເລືອກເຟັ້ນເອົາຈັງຫວະ, ທຳນອງເພງສາກົນ, ຍຸກສະໄໝ ທີ່ມວນມະນຸດຮັບຮູ້ ແລະ ນິຍົມ ຊົມຊອບເຂົ້າໃນການປະດິດຄິດແຕ່ງບົດເພງ ຂອງຕົນ ຕາມຄວາມເໝາະສົມລະຫວ່າງ ທຳນອງ ກັບ ເນື້ອຮ້ອງຕ້ອງກົມກຽວສອດຄ່ອງກັນ ເຊັ່ນ: ເນື້ອໃນທີ່ມີລັກສະນະປຸກລະດົມ, ສັນລະເສີນ, ເຂັ້ມແຂງ, ສະຫງ່າອົງອາດ, ນິ້ມນວນ, ອອນຊອນ, ມ່ວນຊື່ນ, ຕື່ນເຕັ້ນ ແລະອື່ນໆ;
5. ສົ່ງເສີມການປະດິດຄິດແຕ່ງ ເພງຮ້ອງລວມໝູ່ຂະໜາດໃຫຍ່, ຮ້ອງລວມໝູ່ຍິງ-ຊາຍ, ຮ້ອງໝູ່ຍິງ, ໝູ່ຊາຍ, ຮ້ອງຄູ່, ຮ້ອງດ່ຽວ; ເອົາໃຈໃສ່ສົ່ງເສີມເພງຮ້ອງສຳລັບເດັກ ແລະຊົນເຜົ່າຕ່າງໆ.

**ມາດຕາ 20 ການສົ່ງອອກ-ນຳເຂົ້າສິລະປິນ ແລະຜະລິດຕະພັນສິລະປະການສະແດງ**

ການສົ່ງອອກ-ນຳເຂົ້າ ສິລະປິນດ່ຽວ, ລວມໝູ່ ເພື່ອຈຸດປະສົງໃນການສະແດງແລກປ່ຽນທາງດ້ານສິລະປະວັດທະນະທຳ ຫຼືດຳເນີນທຸລະກິດ ຕ້ອງຍື່ນຄຳຮ້ອງ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຕໍ່ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ.

ການສົ່ງອອກ-ນຳເຂົ້າ ຜະລິດຕະພັນສິລະປະການສະແດງ ທຸກປະເພດດ້ວຍພາບ ແລະສຽງເພື່ອຈຸດປະສົງ ໃນການແລກປ່ຽນທາງດ້ານວັດທະນະທຳ ຫຼືດຳເນີນທຸລະກິດ ຕ້ອງປະຕິ ບັດຕາມກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ຂອງ ສປປ ລາວ.

## ໝວດທີ 6
## ສິລະປິນ ແລະການເຄື່ອນໄຫວຂອງສິລະປິນ

**ມາດຕາ 21 ປະເພດສິລະປິນ**

ສິລະປິນ ທີ່ເຄື່ອນໄຫວວຽກງານສິລະປະການສະແດງແບ່ງອອກເປັນ ສາມ ປະເພດ ຄື: ອາຊີບ, ເຄິ່ງອາຊີບ ແລະສະໝັກຫຼິ້ນ.

1. **ສິລະປິນອາຊີບ** ແມ່ນສິລະປິນທີ່ເຄື່ອນໄຫວວຽກງານສິລະປະການສະແດງປະເພດຕ່າງໆ ເປັນອາຊີບຕົ້ນຕໍ ໄດ້ແກ່ບັນດາກອງສະແດງ ທີ່ໄດ້ຮັບການຈັດຕັ້ງຄຸ້ມຄອງ, ຊີ້ນຳນຳພາໂດຍກົງ ແລະຮອບດ້ານ ເຊັ່ນ: ທາງດ້ານວິຊາການ, ບຸກຄະລາກອນ, ງົບປະມານ ແລະການປະກອບພື້ນຖານວັດຖຸເຕັກນິກ ຢ່າງເປັນລະບົບຄົບຊຸດຂັ້ນພື້ນຖານ ຈາກອົງການຈັດຕັ້ງ ຂອງລັດຂັ້ນຕ່າງໆ ແລະຂອງບຸກຄົນນິຕິບຸກຄົນ ທີ່ເຄື່ອນໄຫວ ໃນຮູບການທຸລະກິດ;
2. **ສິລະປິນເຄິ່ງອາຊີບ** ແມ່ນບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ປະກອບກິດຈະການດ້ານສິລະປະການສະແດງ ເປັນອາຊີບສຳຮອງ ຄຽງຄູ່ກັບການດຳເນີນອາຊີບອື່ນ;

3. **ສິລະປິນສະໝັກຫຼິ້ນ** ແມ່ນບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ປະກອບກິດຈະການດ້ານສິລະປະການສະແດງ ທີ່ປະກອບສ່ວນເຄື່ອນໄຫວວຽກງານສິລະປະການສະແດງ ເປັນບາງຄັ້ງຄາວ, ບາງໄລຍະຕາມກາລະໂອກາດ ແລະເງື່ອນໄຂ.

ມາດຕາ 22 ການເຄື່ອນໄຫວຂອງສິລະປິນ

ສິລະປິນອາຊີບ, ເຄິ່ງອາຊີບ ແລະສະໝັກຫຼິ້ນ ທຸກຂະແໜງການແມ່ນຜູ້ເຜີຍແຜ່ທາງດ້ານແນວຄິດວັດທະນະທຳ, ຊຶ່ງມີໜ້າທີ່ນຳເອົາແນວທາງສິລະປະວັດທະນະທຳອັນດີງາມ ຂອງຊາດ, ຂອງເຜົ່າ ເຄື່ອນໄຫວສະແດງຊຸກຍູ້, ປຸກລະດົມ, ສ້າງບັນຍາກາດເບີກບານມ່ວນຊື່ນ ໃນສະຖານບັນເທີງຄົບງັນງານບຸນຢູ່ຕາມທ້ອງຖິ່ນ, ເຂດ, ແຂວງ, ພາກພື້ນ ແລະສາກົນ.

ມາດຕາ 23 **ການເຂົ້າຮ່ວມເຄື່ອນໄຫວກິດຈະກຳອື່ນ**

ສິລະປິນທຸກຂະແໜງ ສາມາດເຂົ້າຮ່ວມຂະບວນການກວດສອບ, ແຂ່ງຂັນເພື່ອສົ່ງເສີມຄວາມຮູ້ຄວາມສາມາດ ແລະພອນສະຫວັນ ຂອງຕົນປະກອບສ່ວນສ້າງສີສັນບັນເທີງ ໃນງານມະໂຫລານ ສິລະປະວັດທະນະທຳພື້ນເມືອງບັນດາເຜົ່າ, ພາກພື້ນ ແລະສາກົນ; ເປັນຕົວແທນໃນການເຜີຍແຜ່ສິລະປະວັດທະນະທຳອັນດີງາມ ຂອງຊາດ, ຂອງເຜົ່າ ເພື່ອສ້າງຄວາມສາມັກຄີມິດຕະພາບ ແລະ ການຮ່ວມມືກັບບັນດາປະເທດ ໃນພາກພື້ນ ແລະສາກົນ.

ມາດຕາ 24 **ຈັນຍາບັນ, ມາລະຍາດ ແລະການແຕ່ງກາຍຂອງສິລະປິນ**

1. ຈັນຍາບັນ ແລະ**ມາລະຍາດ** ໃນເວລາປະຕິບັດໜ້າທີ່ການສະແດງ ຢູ່ສະຖານທີ່ຕ່າງໆ ສິລະປິນທຸກຄົນ ຕ້ອງມີຈັນຍາບັນ ແລະມາລະຍາດ ດັ່ງນີ້:

- ສັດຊື່ ແລະຮັກມັກຢ່າງສຸດຊຶ້ງ ຕໍ່ອາຊີບ ຂອງຕົນ, ຊື່ສັດຕໍ່ບົດປະພັນ, ບົດບາດ ຂອງຕົວລະຄອນຕ່າງໆ ທີ່ຕົນເອງກຳລັງຮັບບົດສະແດງຢູ່;
- ຕ້ອງໃຫ້ກຽດ, ປະຕິບັດ ແລະເຊື່ອຟັງຜູ້ກຳກັບຄວບຄຸມການສະແດງ ຢ່າງເຂັ້ມງວດ ພ້ອມທັງມີມາລະຍາດ, ຮູ້ຮັກສາກຽດຕົນເອງ, ໃຫ້ກຽດແກ່ເພື່ອນຮ່ວມງານ ແລະຜູ້ຊົມ;
- ສຸມທຸກຄວາມຮູ້, ຄວາມສາມາດ, ອາລົມຈິດ, ທ່າທີລີລາຕ່າງໆ ເພື່ອສະແດງຕາມບົດບາດ ແລະຈຸດປະສົງ ຂອງບົດປະພັນນັ້ນໆ ໃຫ້ເຂົ້າເຖິງອາລົມ, ຈິດໃຈ ແລະ ຄວາມຕ້ອງການຂອງຜູ້ ຟັງ, ຜູ້ຊົມໄດ້ເປັນຢ່າງດີ.

2. **ການແຕ່ງກາຍ**

ໃນເວລາປະຕິບັດໜ້າທີ່ການສະແດງຢູ່ສະຖານທີ່ຕ່າງໆ ສິລະປິນທຸກຄົນ ຕ້ອງແຕ່ງຕົວໃຫ້ຖືກຕ້ອງເໝາະສົມ ຕາມບົດບາດ ຂອງຕົວລະຄອນ ໃນບົດປະພັນ ທີ່ຕົນເອງ ກຳລັງຮັບບົດສະແດງຢູ່. ການນຸ່ງຖື, ເອ້ຢ້ອງ ໃຫ້ຖືກຕ້ອງສອດຄ່ອງກັບມູນເຊື້ອ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ພ້ອມກັນນັ້ນ ກໍຕ້ອງຮູ້ເລືອກເອົາການນຸ່ງຖື, ແຕ່ງກາຍທີ່ຈົບງາມ, ທັນສະໄໝ, ສອດຄ່ອງກັບກາລະເທສະ ແລະປະເພດການສະແດງນັ້ນໆ ໂດຍບໍ່ສໍ່ສະແດງ ເຖິງຄວາມຍົວະຍວນ, ເຊື່ອມຊາມ, ລາມົກ ອະນາຈານ.

**ມາດຕາ 25 ການເຜີຍແຜ່ຜະລິດຕະພັນສິລະປະການສະແດງ ຕໍ່ສາທາລະນະຊົນ ແລະສື່ມວນຊົນ**

ຜະລິດຕະພັນສິລະປະການສະແດງ ທີ່ຈະນຳອອກເຜີຍແຜ່, ຊື້-ຂາຍ ໃນສັງຄົມທັງພາຍໃນ ແລະຕ່າງປະເທດ ຜ່ານສື່ມວນຊົນ, ສື່ເອເລັກໂຕຼນິກປະເພດຕ່າງໆ ຕ້ອງໄດ້ຮັບການກວດຜ່ານ ແລະອະນຸຍາດຢ່າງຖືກຕ້ອງ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ.

ຜະລິດຕະພັນສິລະປະການສະແດງ ທີ່ຈະນຳໄປເຜີຍແຜ່ ຜ່ານວິທະຍຸກະຈາຍສຽງ ແລະ ໂທລະພາບຊ່ອງຕ່າງໆ ຕ້ອງໄດ້ຮັບການຄັດເລືອກ, ຈັດສັນ ແລະອະນຸຍາດໂດຍກົງ ຈາກຄະນະບັນນາທິການ ສື່ມວນຊົນ ຂອງຂະແໜງການຖະແຫຼງຂ່າວ, ວັດທະນາທຳ ແລະ ທອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ.

ການນຳໃຊ້ພາບ, ສຽງ, ເພງຮ້ອງ, ຂັບ, ລຳ ຂອງຕ່າງປະເທດ ແລະເວລາເປີດ-ປິດ ການບັນເທີງ ໃນສະຖານທີ່ຕ່າງໆ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 26 ສິດຂອງສິລະປິນ**

ສິລະປິນມີສິດ ດັ່ງນີ້:

1. ສະເໜີພາບຕໍ່ໜ້າກົດໝາຍ, ຄົ້ນຄວ້າ, ສຶກສາຮ່ຳຮຽນ, ເພື່ອຍົກລະດັບທາງການເມືອງ, ວິຊາສະເພາະ ແລະວັດທະນະທຳ;
2. ຄົ້ນຄວ້າປະດິດຄິດແຕ່ງ ແລະສະແດງຜົນງານຂອງຕົນ ທີ່ໄດ້ຮັບການກວດຜ່ານ ແລະ ອະນຸຍາດຢ່າງຖືກຕ້ອງ ຕາມລະບຽບການ ຕໍ່ສາທາລະນະຊົນ ໂດຍຜ່ານການສະແດງ, ການບັນທຶກສຽງ, ພາບເຜີຍແຜ່ຜ່ານສື່ມວນຊົນ ທັງພາຍໃນ ແລະຕ່າງປະເທດ;
3. ໄດ້ຮັບການປົກປ້ອງລິຂະສິດ ແລະສິດກ່ຽວກັບ ລິຂະສິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ແລະກົດໝາຍອື່ນ ທີ່ກ່ຽວຂ້ອງ;
4. ເຄື່ອນໄຫວ, ດຳເນີນທຸລະກິດ ທາງດ້ານສິລະປະການສະແດງທີ່ຖືກຕ້ອງ ຕາມລະບຽບ, ກົດໝາຍ.

**ມາດຕາ 27 ພັນທະຂອງສິລະປິນ**

ສິລະປິນມີພັນທະ ດັ່ງນີ້:

1. ໂຄສະນາເຜີຍແຜ່ແນວທາງນະໂຍບາຍ, ລະບຽບ, ກົດໝາຍ ໂດຍຜ່ານການເຄື່ອນໄຫວວຽກງານສິລະປະການສະແດງ ໃນແຕ່ລະໄລຍະ;
2. ເຄົາລົບລັດຖະທຳມະນູນ, ປະຕິບັດກົດໝາຍ ແລະລະບຽບການຕ່າງໆ ກ່ຽວກັບ ວຽກງານສິລະປະການສະແດງ;
3. ອະນຸລັກ, ປົກປັກຮັກສາ ເສີມຂະຫຍາຍມູນເຊື້ອສິລະປະວັດທະນະທຳ, ຮີດຄອງປະເພນີ ອັນດີງາມ ຂອງຊາດ, ຂອງເຜົ່າ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ;
4. ຖ່າຍທອດຄວາມຮູ້, ຄວາມສາມາດ, ບົດຮຽນ, ປະສົບການຕ່າງໆເພື່ອບຳລຸງສ້າງສິລະປິນ ຮຸ່ນສືບທອດ ແລະມອບສຳເນົາຜະລິດ ຕະພັນສິລະປະການສະແດງ ຂອງຕົນເອງ ເພື່ອເປັນມໍຣະດົກ ໃຫ້ແກ່ອົງການທີ່ກ່ຽວ ຂ້ອງຂອງລັດ ໃນການຄົ້ນຄວ້າ, ສຶກສາຮ່ຳຮຽນ;

5. ເສຍພາສີ, ອາກອນ, ຄ່າທຳນຽມ ແລະພັນທະອື່ນ ໃຫ້ລັດຕາມລະບຽບ, ກົດໝາຍ.

## ໝວດທີ 7

## ມາດຕະຖານເວທີການສະແດງ

### ມາດຕາ 28 ມາດຕະຖານເວທີສະແດງໃນຮົ່ມ ແລະກາງແຈ້ງ

ເພື່ອຮັບປະກັນຄຸນນະພາບໃຫ້ແກ່ການສະແດງ ຕ້ອງມີເວທີສະແດງໃນຮົ່ມ ແລະກາງແຈ້ງ ທີ່ໄດ້ມາດຕະຖານ ດັ່ງນີ້:

1. ມີຂະໜາດເວທີ ທີ່ເໝາະສົມກັບການສະແດງນ້ອຍ ຫຼືໃຫຍ່ພໍສົມຄວນ, ມີລະບົບເຕັກນິກ, ແສງ, ສີ, ສຽງ ແລະສິ່ງເອື້ອອຳນວຍຄວາມສະດວກຕ່າງໆ ໃຫ້ແກ່ການສະແດງ;
2. ມີສະຖານທີ່, ເງື່ອນໄຂ ແລະສະພາບແວດລ້ອມທີ່ດີ ເພື່ອຮອງຮັບຜູ້ຟັງ, ຜູ້ຊົມ ໃຫ້ມີຄວາມສະດວກສະບາຍ, ບໍ່ແອອັດ, ຄັບແຄບເກີນຄວນ ແລະຮັບປະກັນຄວາມປອດໄພ;
3. ເວທີການສະແດງຕ້ອງຫ່າງຈາກວັດວາອາຮາມ, ໂຮງໝໍ, ໂຮງຮຽນ ແລະບ່ອນທີ່ມີຊຸມຊົນໜາແໜ້ນ ພ້ອມທັງມີລະບົບເກັບສຽງ ເພື່ອບໍ່ໃຫ້ສຽງດັງເກີນຄວນ ຊຶ່ງເປັນການລົບກວນຄວາມສະຫງົບສຸກຂອງຜູ້ອື່ນ ແລະຄົບງັນບັນເທີງຕາມເວລາທີ່ໄດ້ກຳນົດໄວ້ໃນລະບຽບ, ກົດໝາຍ.

### ມາດຕາ 29 ມາດຕະຖານເວທີສະແດງເຄື່ອນທີ່

ການອອກແບບ ແລະຕິດຕັ້ງເວທີເຄື່ອນທີ່ ເພື່ອສະແດງສິລະປະດົນຕີ, ຄົບງັນບຸນ ຕາມປະເພນີ ແລະງານສະແດງສະເຫຼີມສະຫຼອງພິທີກຳຕ່າງໆ ຕ້ອງຄຳນຶງເຖິງຄວາມສະຫງົບປອດໄພໃຫ້ແກ່ນັກສະແດງ, ຜູ້ຟັງ ແລະຜູ້ຊົມ ພ້ອມທັງຄວບຄຸມສຽງ ບໍ່ໃຫ້ມີສຽງດັງເກີນໄປ ແລະຄົບງັນບັນເທີງ ຕາມເວລາ ທີ່ໄດ້ກຳນົດໄວ້ໃນລະບຽບ, ກົດໝາຍ.

## ໝວດທີ 8

## ຂໍ້ຫ້າມ

### ມາດຕາ 30 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ນຳເອົາສິລະປະການສະແດງ ເປັນເຄື່ອງມືໃນການເຄື່ອນໄຫວ, ໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີ, ຍຸແຍ່ແບ່ງແຍກຄວາມສາມັກຄີປອງດອງ ລະຫວ່າງບັນດາເຜົ່າ, ສາສະໜາ ກໍຄືແນວທາງນະໂຍບາຍ ຂອງພັກ, ກົດໝາຍ ຂອງລັດ ແລະມ້າງເພທຳລາຍມູນເຊື້ອ ສິລະປະວັດທະນະທຳ ອັນດີງາມຂອງຊາດ, ຂອງເຜົ່າ;
2. ນຳເອົາສິລະປະການສະແດງ ທີ່ເປັນພິດໄພ, ເຊື່ອມຊາມ, ລາມົກອະ ນາຈານ ທັງຍຸຍົງສົ່ງເສີມເບື່ອເມົາ ກໍ່ໃຫ້ເກີດຄວາມຮຸນແຮງ, ອາຊະຍາກຳ, ສິ່ງເສບຕິດ, ການພະນັນ, ການເຊື່ອຖືງົມງວາຍ ແລະສິ່ງຫຍໍ້ທໍ້ອື່ນໆ ມາຈັດຕັ້ງເຜີຍແຜ່ໃນ ສປປ ລາວ;
3. ລັກໂລບ, ສໍ້ໂກງ ເອົາຜົນງານຂອງຜູ້ອື່ນໄປເປັນ ຂອງຕົນເອງ ຫລືນຳໄປ ບັນທຶກຖ່າຍທຳພາບ, ສຽງ, ຈັດພິມ, ຈິດກ່າຍ, ລອກແບບ ຫຼືດັດແປງ, ປັບປຸ່ງເນື້ອໃນບົດປະພັນ ແລະຜະລິດຕະພັນພາບ, ສຽງ, ສິລະປະການສະແດງທຸກປະເພດ ທີ່ບໍ່

ໄດ້ຮັບການເຫັນດີຈາກເຈົ້າຂອງ ລິຂະສິດ ແລະການອະນຸຍາດ ຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງ;

4. ນຳເອົາຜະລິດຕະພັນສິລະປະການສະແດງທຸກປະເພດ ທີ່ບໍ່ທັນໄດ້ຮັບການອະນຸຍາດກວດຜ່ານໄປເຄື່ອນໄຫວສະແດງ ຫຼືເຜີຍແຜ່ຜ່ານສື່ມວນຊົນຢູ່ໃນສັງຄົມ ທັງພາຍໃນ ແລະຕ່າງປະເທດ;
5. ສະແດງທ່າທີກິລິຍາ, ເວັ້ຍ້ອງແຕ່ງກາຍ, ນຸ່ງຖືບໍ່ສອດຄ່ອງກັບເນື້ອໃນຈິດໃຈ ຂອງບົດປະພັນ ແລະການສະແດງ ຫຼືມີການປະພຶດໄປໃນທາງເຊື່ອມເສຍ ທີ່ເປັນການສ້າງແບບຢ່າງອັນບໍ່ດີໃຫ້ແກ່ຊາວ ໜຸ່ມ, ເຍົາວະຊົນ ແລະສັງຄົມ;
6. ເຄື່ອນໄຫວສະແດງກາຍກຳນົດເວລາ ແລະຕາມສະຖານທີ່ ທີ່ບໍ່ອະນຸຍາດ;
7. ນຳໃຊ້ພາບ, ສຽງ, ເພງຮ້ອງ, ຂັບ, ລຳ ຂອງຕ່າງປະເທດ ເກີນຂອບເຂດທີ່ລະບຽບ, ກົດໝາຍໄດ້ກຳນົດເຄື່ອນໄຫວສະແດງ, ໂຄສະນາ ຂາຍສິນຄ້າ, ຕາມຮ້ານບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມ ແລະສະຖານທີ່ສາທາລະນະ ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບ, ກົດໝາຍ.

**ມາດຕາ 31 ຂໍ້ຫ້າມສຳລັບພະນັກງານຂອງລັດ**

ຫ້າມພະນັກງານ ຂອງລັດມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດ ກັບສິລະປິນ ຫຼືຜູ້ປະກອບກິດຈະການ ສິລະປະການສະແດງ ປອມແປງເອກະສານ ແລະນຳໃຊ້ເອກະສານປອມ;
2. ກົດໜ່ວງຖ່ວງດຶງເອກະສານ, ຫຼອກລວງ, ສໍ້ໂກງ, ນາບຂູ່, ຮີດໄຖ ຕໍ່ສິລະປິນ ແລະຜູ້ປະກອບກິດຈະການ ເພື່ອສະແຫວງຫາຜົນປະໂຫຍດໃຫ້ຕົນເອງ, ຄອບຄົວ ແລະພັກພວກ;
3. ນຳໃຊ້, ດັດແປງ, ປັບປ່ຽນເນື້ອໃນ, ຮູບແບບບົດປະພັນ, ຜະລິດຕະພັນ, ການເຄື່ອນໄຫວຕ່າງໆ ຂອງສິລະປິນ ແລະຜູ້ປະກອບກິດຈະການໂດຍລຳພັງ;
4. ຈຳແນກ ຫຼືເລືອກປະຕິບັດ ໃນການແກ້ໄຂບັນຫາ, ເຫັນແກ່ຄອບຄົວ, ພີ່ນ້ອງ ແລະພັກພວກ, ລຳອຽງ, ເຂົ້າຂ້າງ-ອອກຂາ ຫຼືມີການໃສ່ຮ້າຍປ້າຍສີ ຝ່າຍກົງກັນຂ້າມແບບບໍ່ເປັນທຳ ແລະບໍ່ສອດຄ່ອງກັບລະບຽບ, ກົດໝາຍ;
5. ນຳໃຊ້ ຫຼືລັກໂລບ, ຕັດຮອນເອົາບັນດາຜະລິດຕະພັນ, ວັດຖຸ, ອຸປະກອນທີ່ຍຶດໄວ້ເປັນຂອງກາງໃນການດຳເນີນຄະດີ ຕາມຂະບວນການຍຸຕິທຳ.
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບ, ກົດໝາຍ.

## ໝວດທີ 9
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 32 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງສາມາດດຳເນີນໄດ້ດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງບໍລິຫານ;

3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການແກ້ໄຂໂດຍສານປະຊາຊົນ;

5. ການແກ້ໄຂທີ່ມີລັກສະນະສາກົນ.

ມາດຕາ 33 **ການປະນີປະນອມ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບ ການເຄື່ອນໄຫວວຽກງານສິລະປະການສະແດງ ຄູ່ກໍລະນີຕ້ອງປຶກສາຫາລື, ທາທາງອອກຮ່ວມກັນຢ່າງສັນຕິວິທີ ດ້ວຍການປະນີປະນອມ ເພື່ອຄວາມເຂົ້າໃຈ ຊຶ່ງກັນ ແລະກັນ.

ມາດຕາ 34 **ການແກ້ໄຂທາງບໍລິຫານ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບການເຄື່ອນໄຫວວຽກງານສິລະປະການສະແດງ ຄູ່ກໍລະນີມີສິດສະເໜີ ຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ບ່ອນທີ່ຕົນໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວສະແດງ ຫຼືປະກອບກິດຈະການດຳເນີນທຸລະກິດນັ້ນ ເພື່ອພິຈາລະນາແກ້ໄຂຕາມລະບຽບ, ກົດໝາຍ.

ມາດຕາ 35 **ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບການເຄື່ອນໄຫວວຽກງານສິລະປະການສະແດງ ຄູ່ກໍລະນີ ມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂຕາມລະບຽບ, ກົດໝາຍ.

ມາດຕາ 36 **ການແກ້ໄຂໂດຍສານປະຊາຊົນ**

ເມື່ອມີຂໍ້ຂັດແຍ່ງ ກ່ຽວກັບ ການເຄື່ອນໄຫວວຽກງານສິລະປະການສະແດງ ຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ສາມາດຮ້ອງຟ້ອງ ຕໍ່ສານປະຊາຊົນ ຕາມຂະບວນການຍຸຕິທຳ.

ມາດຕາ 37 **ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການເຄື່ອນໄຫວວຽກງານສິລະປະການສະແດງ ທີ່ພົວພັນກັບສາກົນ ຄູ່ກໍລະນີສາມາດສະເໜີ ຕໍ່ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ ຫຼືຕ່າງປະເທດ ຕາມການຕົກລົງກັນ ໂດຍປະຕິບັດຕາມສົນທິສັນຍາ ແລະສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 10

## ການຄຸ້ມຄອງ ແລະກວດກາວຽກງານສິລະປະການສະແດງ

ມາດຕາ 38 **ຄວາມຮັບຜິດຊອບຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ຮັບຜິດຊອບວຽກງານສິລະປະການສະແດງ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ກ່ຽວກັບວຽກງານສິລະປະການສະແດງ;

2. ຜັນຂະຫຍາຍແນວທາງນະໂຍບາຍ, ກົດໝາຍເປັນແຜນການ, ແຜນງານ, ໂຄງການ ໃນການຟື້ນຟູ, ອະນຸລັກ, ປົກປັກຮັກສາພັດທະນາ ແລະເຜີຍແຜ່ວຽກງານສິລະປະການສະແດງທົ່ວປະເທດ;
3. ຂຶ້ນແຜນກຳນົດການບຳລຸງ ແລະກໍ່ສ້າງຖັນແຖວພະນັກງານ ທີ່ເຮັດວຽກສິລະປະການສະແດງທຸກຂະແໜງ ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ວັດທະນະທຳ ແລະວິຊາສະເພາະໃນຂອບເຂດທົ່ວປະເທດ;
4. ຄົ້ນຄວ້າ, ເຜີຍແຜ່, ແນະນຳ ແລະກວດກາ ການນຳໃຊ້ເຕັກນິກວິທະຍາສາດ, ເຄື່ອງມື, ອຸປະກອນໃຫ້ວຽກງານສິລະປະການສະແດງ ໃນຂອບເຂດທົ່ວປະເທດ;
5. ຄົ້ນຄວ້າ, ກວດຜ່ານບົດປະພັນ ແລະຜະລິດຕະພັນສິລະປະການສະແດງ ຂັ້ນສູນກາງ;
6. ກວດກາການຈັດຕັ້ງປະຕິບັດລະບຽບ, ກົດໝາຍ ກ່ຽວກັບ ການເຄື່ອນໄຫວວຽກງານສິລະປະການສະແດງ ຂອງສິລະປິນ, ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງຕ່າງໆ;
7. ຄົ້ນຄວ້າ, ວາງແຜນ, ຊີ້ນຳນຳພາ ໃນການປະດິດແຕ່ງ ແລະການສະແດງ ຂອງບັນດາກອງສະແດງອາຊີບ, ການຈັດງານສຳຄັນລະດັບຊາດ ເຊັ່ນ: ວັນບຸນປະຫວັດສາດ ຂອງພັກ, ຂອງຊາດ, ງານມະຫາກຳກິລາແຫ່ງຊາດ ຫຼືງານເທດສະການຕ່າງໆ ຂອງພາກພື້ນ ແລະສາກົນ;
8. ຊີ້ນຳ, ຊ່ວຍອົງການປົກຄອງທ້ອງຖິ່ນ ແລະໜ່ວຍງານສິລະປະການສະແດງອື່ນ, ໃນການຕິດຕາມກວດກາ ແລະສະຫຼຸບ, ຖອດຖອນບົດຮຽນ, ລາຍງານການເຄື່ອນໄຫວວຽກງານ ຂອງຕົນ;
9. ກວດກາການປະຕິບັດນະໂຍບາຍ ແລະມາດຕະການຕ່າງໆ ຕໍ່ສິລະປິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ກ່ຽວຂ້ອງ ກັບການເຄື່ອນໄຫວວຽກງານສິລະປະການສະແດງ;
10. ພົວພັນ ແລະຮ່ວມມືກັບບັນດາປະເທດ ໃນພາກພື້ນ ແລະສາກົນ ກ່ຽວກັບ ວຽກງານສິລະປະການສະແດງ;
11. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານ ຂອງຕົນ ໃນແຕ່ລະໄລຍະໃຫ້ລັດຖະບານຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

**ມາດຕາ 39 ຄວາມຮັບຜິດຊອບ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງ, ນະຄອນ**

ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງ, ນະຄອນ ຮັບຜິດຊອບວຽກງານສິລະປະການສະແດງ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນຍຸດທະສາດ ແລະກົດໝາຍ, ແຜນງານ, ໂຄງການ ໃນການຟື້ນຟູ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະເຜີຍແຜ່ ວຽກງານສິລະປະການສະແດງ ໃນແຂວງ, ນະຄອນ ຂອງຕົນ;
2. ອອກລະບຽບການ ເພື່ອແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນ ຈາກສິລະປະການສະແດງໃນແຂວງ, ນະຄອນ ຂອງຕົນ;

3. ຂື້ນແຜນບຳລຸງ, ສ້າງ ແລະສັບຊ້ອນພະນັກງານ ໃຫ້ສອດຄ່ອງເໝາະສົມ ກັບ ຄວາມຕ້ອງການ ຂອງວຽກງານສິລະປະການສະແດງ;
4. ຄົ້ນຄວ້າ, ເຜີຍແຜ່, ແນະນຳ ແລະກວດກາ ການປະກອບເຄື່ອງມື, ອຸປະກອນໃຫ້ວຽກງານສິລະປະການສະແດງໃນແຂວງ, ນະຄອນ ຂອງຕົນ;
5. ກວດກາການຈັດຕັ້ງປະຕິບັດລະບຽບ, ກົດໝາຍ ກ່ຽວກັບ ການເຄື່ອນໄຫວວຽກງານສິລະ ປະການສະແດງ ຂອງສິລະປິນ, ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງຕ່າງໆ;
6. ກວດຜ່ານບົດປະພັນ ແລະຜະລິດຕະພັນສິລະປະການສະແດງ, ອອກຄຳສັ່ງ, ຄຳແນະນຳ, ແຈ້ງການໃຫ້ສິລະປິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງວຽກງານສິລະປະການສະແດງ ທີ່ຂຶ້ນກັບຕົນ ປັບປຸງ, ປ່ຽນແປງ ຫຼືຢຸດເຊົາ ການເຄື່ອນໄຫວວຽກງານ ທີ່ບໍ່ສອດຄ່ອງກັບລະບຽບ, ກົດໝາຍ;
7. ຄົ້ນຄວ້າ, ວາງແຜນ, ຊີ້ນຳນຳພາ ການປະດິດແຕ່ງ ແລະການສະແດງ ເພື່ອຮັບໃຊ້ງານສຳຄັນຕ່າງໆ ຂອງແຂວງ, ນະຄອນ ຂອງຕົນ;
8. ຊີ້ນຳຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວເມືອງ ແລະໜ່ວຍງານອື່ນໆ ໃນການຕິດຕາມກວດກາ, ສະຫຼຸບ, ຖອດຖອນບົດຮຽນ ແລະລາຍງານການເຄື່ອນໄຫວວຽກງານສິລະປະການສະແດງ ໃນແຕ່ລະໄລຍະໃຫ້ຂັ້ນເທິງຂອງຕົນ;
9. ກວດກາ ການປະຕິບັດນະໂຍບາຍ ແລະມາດຕະການ ຕໍ່ສິລະປິນ, ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ກັບ ການເຄື່ອນໄຫວວຽກງານສິລະປະການສະແດງແຂວງ, ນະຄອນຂອງຕົນ;
10. ພົວພັນ ແລະຮ່ວມມື ທາງດ້ານສິລະປະການສະແດງ ກັບບັນດາປະເທດ ເພື່ອນບ້ານໃກ້ຄຽງ;
11. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານ ຂອງຕົນໃນແຕ່ລະໄລຍະໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ແລະອົງການປົກຄອງແຂວງ, ນະຄອນຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

**ມາດຕາ 40 ຄວາມຮັບຜິດຊອບ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວເມືອງ, ເທດສະບານ**

ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ ຮັບຜິດຊອບວຽກງານສິລະປະການສະແດງ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນງານ, ໂຄງການໃນການຟື້ນຟູ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະເຜີຍແຜ່ ວຽກງານສິລະປະການສະແດງ ໃນເມືອງ, ເທດສະບານຂອງຕົນ;
2. ອອກລະບຽບການຕ່າງໆ ເພື່ອຄຸ້ມຄອງວຽກງານສິລະປະການສະແດງ ໃນຂອບເຂດເມືອງ, ເທດສະບານ ຂອງຕົນ;

3. ຄົ້ນຄວ້າ, ເຜີຍແຜ່, ແນະນຳ ແລະກວດກາ ການປະກອບເຄື່ອງມື, ອຸປະກອນໃຫ້ວຽກງານສິລະປະການສະແດງໃນເມືອງ, ເທດສະບານ ຂອງຕົນ;
4. ອອກຄຳສັ່ງ, ຄຳແນະນຳ, ແຈ້ງການໃຫ້ສິລະປິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງວຽກງານສິລະປະການສະແດງ ທີ່ຂຶ້ນກັບຕົນ ປັບປຸງ, ປ່ຽນແປງ ຫຼືຢຸດເຊົາ ການເຄື່ອນໄຫວວຽກງານ ທີ່ບໍ່ສອດ ຄ່ອງກັບລະບຽບ, ກົດໝາຍ;
5. ຄົ້ນຄວ້າ, ວາງແຜນ, ຊີ້ນຳນຳພາການປະດິດແຕ່ງ ແລະການສະແດງ ເພື່ອຮັບໃຊ້ງານ ສຳຄັນຕ່າງໆ ຂອງເມືອງ, ເທດສະບານ;
6. ກວດກາ ການປະຕິບັດນະໂຍບາຍ ແລະມາດຕະການ ຕໍ່ສິລະປິນ, ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ກ່ຽວຂ້ອງ ກັບການເຄື່ອນໄຫວວຽກງານສິລະປະການສະແດງ ຢູ່ເມືອງ, ເທດສະ ບານຂອງຕົນ;
7. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານ ຂອງຕົນ ໃນແຕ່ລະໄລຍະ ໃຫ້ພະແນກຖະແຫຼງຂ່າວ, ວັດທະນາທຳ ແລະທ່ອງທ່ຽວ ແລະອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 41 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ເຊັ່ນ: ຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ, ນາມມະຍົດສິລະປິນ ແລະນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

### ມາດຕາ 42 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດ ມາດຕະການຕາມກໍລະນີເບົາ ຫຼືໜັກ ຄື: ສຶກສາອົບຮົມ, ກ່າວເຕືອນ, ຖອນນາມມະຍົດສິລະປິນ, ປັບໃໝ, ໂຈະ ຫຼື ຖອນ ໃບອະນຸຍາດ ດຳເນີນກິດຈະການ,ໃຊ້ແທນຄ່າເສຍຫາຍທາງແພ່ງ ຕາມທີ່ຕົນກໍ່ຂຶ້ນ ແລະຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 12
## ວັນສິລະປະການສະແດງ, ເຄື່ອງໝາຍ ແລະຕາປະທັບ

### ມາດຕາ 43 ວັນສິລະປະການສະແດງ

ສິລະປະການສະແດງ ແຕ່ລະປະເພດ ມີວັນສະເພາະ ຂອງຕົນ.

ມາດຕາ 44 ເຄື່ອງໝາຍ ແລະຕາປະທັບຂອງສິລະປະການສະແດງ

ສິລະປະການສະແດງ ແຕ່ລະປະເພດມີເຄື່ອງໝາຍສະເພາະຂອງຕົນ ແລະ ນຳໃຊ້ຕາປະທັບ ຂອງອົງການຄຸ້ມຄອງສິລະປະການສະແດງ ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

## ໝວດທີ 13
## ບົດບັນຍັດສຸດທ້າຍ

ມາດຕາ 45 ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເປັນເຈົ້າການສົມທົບກັບບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດ ສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 46 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ